ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ

ເລກທີ 1073 /ສສກ
ນະຄອນຫຼວງວຽງຈັນ, ວັນທີ 3 ຕຸລາ 2022

# ຄໍາສັ່ງ
## ວ່າດ້ວຍການສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້
## ໃນຂະແໜງການສຶກສາທິການ ແລະ ກິລາ

**ເຖິງ**: - ບັນດາ ທ່ານ ຫົວໜ້າຫ້ອງການ, ກົມ, ອົງການທຽບເທົ່າ, ສູນ;
- ທ່ານ ອະທິການບໍດີມະຫາວິທະຍາໄລ ທັງ 04 ແຫ່ງ;
- ທ່ານ ຫົວໜ້າຫ້ອງການກໍາມາທິການສຶກສາສົງສູນກາງ;
- ທ່ານ ຫົວໜ້າພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ;
- ທ່ານ ຫົວໜ້າຫ້ອງການສຶກສາທິການ ແລະ ກິລາ ເມືອງ, ເທດສະບານ, ນະຄອນ;
- ສະຖານການສຶກສາ ທັງພາກລັດ, ເອກະຊົນ ແລະ ສະຖານການສຶກສາສົງ ໃນຂອບເຂດທົ່ວປະເທດ.

- ອີງຕາມ ຄໍາສັ່ງວ່າດ້ວຍການເພີ່ມທະວີວຽກງານສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ໃນສັງຄົມ ສະບັບເລກທີ 27/ນຍ, ລົງວັນທີ 05 ຕຸລາ 2011;
- ອີງຕາມ ວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ 2021-2023;
- ອີງຕາມ ຂໍ້ຕົກລົງວ່າດ້ວຍ ຈັນຍາບັນ, ຂໍ້ຫ້າມ ແລະ ການລົງວິໄນ ຕໍ່ ຄູ ແລະ ບຸກຄະລາກອນຂອງຂະແໜງການສຶກສາທິການ ແລະ ກິລາ ສະບັບເລກທີ 28/ສສກ ລົງວັນທີ 28 ທັນວາ 2021;
- ອີງຕາມ ໜັງສືສະເໜີຂອງກົມກວດກາ ສະບັບເລກທີ 238/ກກ, ລົງວັນທີ 25 ສິງຫາ 2022.

ໃນໄລຍະຜ່ານມາ, ຂະແໜງການສຶກສາທິການ ແລະ ກິລາ ໄດ້ເອົາໃຈໃສ່ຈັດຕັ້ງຜັນຂະຫຍາຍ ແລະ ເຜີຍແຜ່ ຄໍາສັ່ງຂອງນາຍົກລັດຖະມົນຕີ ວ່າດ້ວຍການເພີ່ມທະວີວຽກງານສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ ໃນສັງຄົມ ສະບັບເລກທີ 27/ນຍ, ລົງວັນທີ 05 ຕຸລາ 2011 ແລະ ໄດ້ອອກ ຄໍາສັ່ງວ່າດ້ວຍການສະກັດກັ້ນ ແລະ ແກ້ໄຂສະພາບປະກົດການການຫຍໍ້ທໍ້ ໃນຂະແໜງສຶກສາທິການ ແລະ ກິລາ ສະບັບເລກທີ 1790/ສສກ.ກກ, ລົງວັນທີ 25 ທັນວາ 2013. ຜ່ານການຈັດຕັ້ງປະຕິບັດ ນິຕິກໍາດັ່ງກ່າວ ໄດ້ເຮັດໃຫ້ສະພາບປະກົດການຫຍໍ້ທໍ້ ໃນຂະແໜງການສຶກສາທິການ ແລະ ກິລາ ຫຼຸດລົງ ແລະ ໄດ້ຮັບການແກ້ໄຂ ແຕ່ລະກໍລະນີ. ອີງໃສ່ສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ໃນປະຈຸບັນ ໄດ້ມີປະກົດການຫຍໍ້ທໍ້ເກີດຂຶ້ນຫຼາຍ ໃນສັງຄົມ.

ສະນັ້ນ, ເພື່ອເປັນການເພີ່ມທະວີ ວຽກງານສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ ຂອງຂະແໜງການສຶກສາທິການ ແລະ ກິລາ ໃຫ້ຫຼຸດໜ້ອຍຖອຍລົງ ແລະ ໄດ້ຮັບການແກ້ໄຂທັນກັບສະພາບການ ໃຫ້ມີປະສິດທິພາບ ແລະ ປະສິດຕິຜົນສູງ.

## ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ອອກຄຳສັ່ງ:

1. ການສະກັດກັ້ນ ແລະ ແກ້ໄຂບັນຫາ ຢາເສບຕິດ

1.1. ການສະກັດກັ້ນ ແລະ ແກ້ໄຂບັນຫາ ຢາເສບຕິດ ຂອງພະນັກງານ-ລັດຖະກອນ, ຄູ-ອາຈານ

- ໃຫ້ ຜູ້ບໍລິຫານການສຶກສາ ແລະ ກິລາ ທຸກຂັ້ນ ທັງພາກລັດ ແລະ ພາກເອກະຊົນ ລວມທັງການສຶກສາສົງ ເອົາໃຈໃສ່ເພີ່ມທະວີ ວຽກງານສະກັດກັ້ນ ແລະ ແກ້ໄຂຢາເສບຕິດ ເປັນວຽກຈຸດສຸມເຂົ້າໃນແຜນງານ, ແຜນການ, ໂຄງການ ແລະ ໂຄສະນາເຜີຍແຜ່ ເຖິງຜົນຮ້າຍຂອງຢາເສບຕິດ ທຸກປະເພດ ພ້ອມທັງຕິດຕາມ ພຶດຕິກຳ ການເຄື່ອນໄຫວຂອງພະນັກງານ-ລັດຖະກອນ, ຄູ-ອາຈານ ໃນພາກສ່ວນຕົນຮັບຜິດຊອບ ຢ່າງເປັນປະຈຳ ແລະ ສ້າງສະຖານການສຶກສາປອດສິ່ງເສບຕິດ;
- ຖ້າຫາກພົບເຫັນ ພະນັກງານ-ລັດຖະກອນ ຫຼື ຄູ-ອາຈານ ມີພຶດຕິກຳທີ່ພົວພັນ, ຜະລິດ, ຊື້-ຂາຍ, ສົ່ງ ແລະ ເສບຢາເສບຕິດ ທຸກປະເພດ ຕ້ອງແຈ້ງເຈົ້າໜ້າທີ່ ແລະ ລາຍງານພາກສ່ວນທີ່ກ່ຽວຂ້ອງ ເພື່ອດຳເນີນການ ຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ.

1.2. ການສະກັດກັ້ນ ແລະ ແກ້ໄຂບັນຫາ ຢາເສບຕິດ ຂອງນັກຮຽນ, ນັກສຶກສາ ຫຼື ນັກກິລາ

- ໃຫ້ ຜູ້ບໍລິຫານການສຶກສາ ແລະ ກິລາ ທຸກຂັ້ນ ທັງພາກລັດ ແລະ ພາກເອກະຊົນ ລວມທັງການສຶກສາສົງ ເອົາໃຈໃສ່ເພີ່ມທະວີ ວຽກງານສະກັດກັ້ນ ແລະ ແກ້ໄຂຢາເສບຕິດ ເປັນວຽກຈຸດສຸມເຂົ້າໃນແຜນງານ, ແຜນການ, ໂຄງການ ແລະ ໂຄສະນາເຜີຍແຜ່ ເຖິງຜົນຮ້າຍຂອງຢາເສບຕິດ ທຸກປະເພດ ພ້ອມທັງຕິດຕາມພຶດຕິກຳ ການເຄື່ອນໄຫວຂອງນັກຮຽນ, ນັກສຶກສາ ຫຼື ນັກກິລາ ໃນພາກສ່ວນຕົນຮັບຜິດຊອບ ຢ່າງເປັນປະຈຳ ແລະ ສ້າງສະຖານການສຶກສາປອດສິ່ງເສບຕິດ;
- ຖ້າຫາກພົບເຫັນ ນັກຮຽນ, ນັກສຶກສາ ຫຼື ນັກກິລາ ມີພຶດຕິກຳທີ່ພົວພັນຜະລິດ, ຊື້-ຂາຍ, ສົ່ງ ແລະ ເສບຢາເສບຕິດ ທຸກປະເພດ ຕ້ອງແຈ້ງເຈົ້າໜ້າທີ່ ແລະ ລາຍງານພາກສ່ວນທີ່ກ່ຽວຂ້ອງ ເພື່ອດຳເນີນການ ຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ.

2. ການສະກັດກັ້ນ ແລະ ແກ້ໄຂບັນຫາ ການປະລະການຮຽນ-ການສອນ

- ໃຫ້ ຜູ້ບໍລິຫານການສຶກສາ ແລະ ກິລາ ທຸກຂັ້ນ ທັງພາກລັດ ແລະ ພາກເອກະຊົນ ຈັດຕັ້ງເຜີຍແຜ່ບັນດາ ກົດໝາຍ, ມະຕິ, ຄຳສັ່ງ ແລະ ລະບຽບການ ທີ່ກ່ຽວຂ້ອງ ໃຫ້ແກ່ຄູອາຈານ, ນັກຮຽນ, ນັກສຶກສາ ຫຼື ນັກກິລາ ຢ່າງເລິກເຊິ່ງ, ທົ່ວເຖິງ ແລະ ເປັນປົກກະຕິ, ຊຸກຍູ້, ຕິດຕາມ ການມາປະຈຳການ ແລະ ຂຶ້ນຫ້ອງສອນຂອງຄູອາຈານ, ພ້ອມທັງສົມທົບກັບ ອົງການປົກຄອງ, ຄະນະພັດທະນາການສຶກສາ, ເຈົ້າອະທິການວັດ, ສະມາຄົມພໍ່ແມ່ນັກຮຽນ ແລະ ຜູ້ປົກຄອງນັກຮຽນ ຊຸກຍູ້, ຕິດຕາມ ລູກຫຼານ ໃຫ້ເຂົ້າຮຽນເປັນປົກກະຕິ ແລະ ຮຽນໃຫ້ຈົບ ຕາມຫຼັກສູດ;
- ໃຫ້ ຜູ້ບໍລິຫານການສຶກສາ ແລະ ກິລາ ທຸກຂັ້ນ ທັງພາກລັດ ແລະ ພາກເອກະຊົນ ເພີ່ມທະວີການຈັດຕັ້ງປະຕິບັດ ສາມຂໍ້ແຂ່ງຂັນ ຂອງຂະແໜງການສຶກສາທິການ ແລະ ກິລາ ຄື: ສອນດີ-ຮຽນເກັ່ງ, ຕ້ານປະກົດການຫຍໍ້ທໍ້, ສ້າງສິ່ງແວດລ້ອມທີ່ດີ ໃນ ແລະ ນອກ ສະຖານການສຶກສາ, ສ້າງສິ່ງຈູງໃຈໃຫ້ນັກຮຽນ, ນັກສຶກສາ ແລະ ນັກກິລາ ຢາກມາໂຮງຮຽນ;
- ໃຫ້ ຜູ້ບໍລິຫານການສຶກສາ ແລະ ກິລາ ທຸກຂັ້ນ ທັງພາກລັດ ແລະ ພາກເອກະຊົນ ສ້າງກົນໄກການຕິດຕາມກວດກາ ການຂຶ້ນຫ້ອງສອນ ຂອງຄູ-ອາຈານ, ນັກຮຽນ, ນັກສຶກສາ ຫຼື ນັກກິລາ ທັງໃນ ແລະ ນອກໂຮງຮຽນ;

- ຖ້າຫາກພົບເຫັນ ຄູອາຈານ ບໍ່ມາປະຈໍາການ ຫຼື ບໍ່ຂຶ້ນຫ້ອງສອນ ແມ່ນມອບໃຫ້ຜູ້ບໍລິຫານ ແຕ່ລະຂັ້ນ ປະຕິດບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ພ້ອມທັງລາຍງານພາກສ່ວນທີ່ກ່ຽວຂ້ອງຮັບຊາບ;
- ຖ້າຫາກພົບເຫັນ ນັກຮຽນ, ນັກສຶກສາ ຫຼື ນັກກິລາ ປະລະການຮຽນ ແມ່ນມອບໃຫ້ຜູ້ບໍລິຫານ ແຕ່ລະຂັ້ນ ສົມທົບກັບ ອົງການປົກຄອງ, ຄະນະພັດທະນາການສຶກສາ, ເຈົ້າອະທິການວັດ, ສະມາຄົມພໍ່ ແມ່ ນັກຮຽນ ແລະ ຜູ້ປົກຄອງນັກຮຽນ ປຸກລະດົມ, ຊຸກຍູ້ ໃຫ້ລູກຫຼານ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ສືບຕໍ່ເຂົ້າຮຽນ ແລະ ຮຽນໃຫ້ຈົບຕາມຫຼັກສູດ.

3. ການສະກັດກັ້ນ ແລະ ແກ້ໄຂບັນຫາ ການສໍ້ລາດບັງຫຼວງ

- ໃຫ້ ຜູ້ບໍລິຫານການສຶກສາ ແລະ ກິລາ ທຸກຂັ້ນ ທັງພາກລັດ ແລະ ພາກເອກະຊົນ ຖືເປັນສໍາຄັນ ແລະ ເອົາໃຈໃສ່ວຽກງານສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ໂດຍການໂຄສະນາເຜີຍແຜ່ ບັນດາ ກົດໝາຍ, ມະຕິ, ຄໍາສັ່ງ ແລະ ລະບຽບການທີ່ກ່ຽວຂ້ອງ ໃຫ້ພະນັກງານ-ລັດຖະກອນ, ຄູ-ອາຈານ, ນັກຮຽນ, ນັກສຶກສາ ຫຼື ນັກກິລາ ໃຫ້ຮັບຮູ້, ເຂົ້າໃຈເຖິງຜົນເສຍຫາຍ ຕໍ່ປະເທດຊາດ ຂອງການສໍ້ລາດບັງຫຼວງ ແລະ ໂທດຂອງການກະທໍາຜິດຕ່າງໆ ກ່ຽວກັບການສໍ້ລາດບັງຫຼວງ;
- ໃຫ້ ກົມວິຊາການທີ່ກ່ຽວຂ້ອງ ແຊກຊ້ອນເອົາບາງເນື້ອໃນທີ່ຈໍາເປັນ ຂອງວຽກງານສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ເຂົ້າໃນການຈັດການຮຽນ-ການສອນ ຕາມຄວາມເໝາະສົມ;
- ຖ້າຫາກພົບເຫັນ ພະນັກງານ-ລັດຖະກອນ ຫຼື ຄູ-ອາຈານ ມີພຶດຕິກໍາທີ່ເປັນການສໍ້ລາດບັງຫຼວງ ໃຫ້ດໍາເນີນການກວດກາ, ເກັບກໍາຂໍ້ມູນ ແລະ ຄົ້ນຄວ້າໂທດຕາມແຕ່ລະກໍລະນີ ໜັກ ຫຼື ເບົາ ໃນການແກ້ໄຂ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

4. ການສະກັດກັ້ນ ແລະ ແກ້ໄຂບັນຫາ ຈັດກຸ່ມແກ້ງອັນຕະພານ

- ໃຫ້ ຜູ້ບໍລິຫານການສຶກສາ ແລະ ກິລາ ທຸກຂັ້ນ ທັງພາກລັດ ແລະ ພາກເອກະຊົນ, ຄູປະຈໍາຫ້ອງ, ຄູສອນ, ຄອບຄົວ, ສັງຄົມ ໂຄສະນາ ແລະ ປຸກຈິດສໍານຶກໃຫ້ແກ່ຄູອາຈານ, ນັກຮຽນ, ນັກສຶກສາ ຫຼື ນັກກິລາ ທັງໃນ ແລະ ນອກ ສະຖານການສຶກສາ ຮຽນຮູ້ເຖິງການຢູ່ຮ່ວມກັນ, ການໃຫ້ອະໄພ ເຊິ່ງກັນ ແລະ ກັນ;
- ຖ້າພົບເຫັນພະນັກງານ-ລັດຖະກອນ ຄູ-ອາຈານ, ນັກຮຽນ, ນັກສຶກສາ ຫຼື ນັກກິລາ ເຄື່ອນໄຫວຈັດກຸ່ມແກ້ງອັນຕະພານ ຫຼື ຕີກັນ ແລະ ກໍ່ຄວາມບໍ່ສະຫງົບອື່ນໆ ໃຫ້ຜູ້ບໍລິຫານການສຶກສາ ແລະ ກິລາ ທຸກຂັ້ນທັງພາກລັດ ແລະ ພາກເອກະຊົນ ປະສານສົມທົບກັບ ອົງການປົກຄອງ ແລະ ພໍ່ແມ່ ຫຼື ຜູ້ປົກຄອງ ເພື່ອກ່າວເຕືອນ ແລະ ສຶກສາອົບຮົມ. ຖ້າມີກໍລະນີຮ້າຍແຮງ ໃຫ້ແຈ້ງເຈົ້າໜ້າທີ່ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ດໍາເນີນການຕາມກົດໝາຍ ແລະ ລະບຽບການ ຕາມແຕ່ລະກໍລະນີຂອງການກະທໍາຜິດ.

5. ການສະກັດກັ້ນ ແລະ ແກ້ໄຂບັນຫາ ການຕ້ານການຄ້າມະນຸດ

- ໃຫ້ ກົມວິຊາການທີ່ກ່ຽວຂ້ອງ ແຊກຊ້ອນເອົາບາງເນື້ອໃນທີ່ຈໍາເປັນ ຂອງວຽກງານຕ້ານການຄ້າມະນຸດ ເຂົ້າໃນການຈັດການຮຽນ-ການສອນ ຕາມຄວາມເໝາະສົມ;
- ໃຫ້ ຜູ້ບໍລິຫານການສຶກສາ ແລະ ກິລາ ທຸກຂັ້ນ ທັງພາກລັດ ແລະ ພາກເອກະຊົນ ໂຄສະນາເຜີຍແຜ່ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ ແລະ ນິຕິກໍາອື່ນ ກ່ຽວກັບ ການປ້ອງກັນ, ສະກັດກັ້ນ, ຕ້ານການຄ້າມະນຸດ ແລະ ການຄ້າໂສເພນີ ໃນຂະແໜງການສຶກສາທິການ ແລະ ກິລາ ເພື່ອເປັນການປຸກຈິດສໍານຶກ ໃຫ້ພະນັກງານ-ລັດຖະກອນ, ຄູ-ອາຈານ ນັກຮຽນ, ນັກສຶກສາ ຫຼື ນັກກິລາ ໃຫ້ເຫັນເຖິງຄວາມໝາຍ, ຜົນຮ້າຍ ແລະ ໄພອັນຕະລາຍ ຂອງການຄ້າມະນຸດ ແລະ ການຄ້າໂສເພນີ;

- ໃຫ້ ຜູ້ບໍລິຫານການສຶກສາ ແລະ ກິລາ ທຸກຂັ້ນ ທັງພາກລັດ ແລະ ພາກເອກະຊົນ ປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງເຊັ່ນ: ອົງການປົກຄອງບ້ານ, ຜູ້ປະກອບການບ້ານພັກຕ່າງໆ ອອກລະບຽບການສະເພາະຂອງພາກສ່ວນຕົນ ເພື່ອສະກັດກັ້ນ ຄູ-ອາຈານ, ນັກຮຽນ, ນັກສຶກສາ ຫຼື ນັກກິລາ ມີພຶດຕິກຳທີ່ຜິດຕໍ່ຮີດຄອງປະເພນີຂອງລາວ ແລະ ລະເມີດ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;
- ຖ້າຫາກພົບເຫັນ ພະນັກງານ-ລັດຖະກອນ, ຄູ-ອາຈານ, ນັກຮຽນ, ນັກສຶກສາ ຫຼື ນັກກິລາ ມີພຶດຕິກຳການເຄື່ອນໄຫວ ກ່ຽວກັບການຄ້າມະນຸດ ແລະ ການຄ້າໂສເພນີ ໃຫ້ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອດຳເນີນການແກ້ໄຂ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

**6. ການສະກັດກັ້ນ ແລະ ແກ້ໄຂບັນຫາ ອຸປະຕິເຫດຕາມທ້ອງຖະໜົນ**

- ໃຫ້ ຜູ້ບໍລິຫານການສຶກສາ ແລະ ກິລາ ທຸກຂັ້ນ ທັງພາກລັດ ແລະ ພາກເອກະຊົນ ອອກລະບຽບການສະເພາະຂອງຕົນ ຕາມຈຸດພິເສດ ສອດຄ່ອງ ຕາມກົດໝາຍ ແລະ ລະບຽບການ ແທດເໝາະກັບສະພາບຄວາມເປັນຈິງຂອງແຕ່ລະທ້ອງຖິ່ນ ໃນການນຳໃຊ້ພາຫະນະ ຕາມທ້ອງຖະໜົນ ໃຫ້ມີຄວາມປອດໄພ;
- ໃຫ້ ຜູ້ບໍລິຫານການສຶກສາ ແລະ ກິລາ ທຸກຂັ້ນ ທັງພາກລັດ ແລະ ພາກເອກະຊົນ ປະສານສົມທົບກັບເຈົ້າໜ້າທີ່ປ້ອງກັນຄວາມສະຫງົບ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອໂຄສະນາ ແລະ ເຜີຍແຜ່ ກົດໝາຍ ແລະ ລະບຽບຈະລາຈອນຕາມທ້ອງຖະໜົນ ໃຫ້ຄູ-ອາຈານ, ນັກຮຽນ, ນັກສຶກສາ ຫຼື ນັກກິລາ ຮັບຮູ້, ເຂົ້າໃຈກ່ຽວກັບຜົນຮ້າຍ ແລະ ໄພອັນຕະລາຍ ຈາກການລະເມີດກົດຈະລາຈອນ ເປັນຕົ້ນ ການຂັບຂີ່ລົດໄວ, ການແຂ່ງລົດໃນທ້ອງຖະໜົນ, ດັດແກ້ເຕັກນິກລົດ, ຂັບຂີ່ລົດບໍ່ໃສ່ໝວກກັນກະທົບ, ເມົາແລ້ວຂັບລົດ ແລະ ອື່ນໆ ເພື່ອພ້ອມກັນຕ້ານ, ສະກັດກັ້ນ ແລະ ແກ້ໄຂອຸປະຕິເຫດ ຢູ່ໃນທ້ອງຖະໜົນໃຫ້ຫຼຸດໜ້ອຍຖອຍລົງ;
- ຖ້າຫາກພົບເຫັນ ນັກຮຽນ, ນັກສຶກສາ ຫຼື ນັກກິລາ ຂັບຂີ່ລົດໄວ, ການແຂ່ງລົດຕາມທ້ອງຖະໜົນ, ດັດແກ້ເຕັກນິກລົດ ຫຼື ພຶດຕິກຳອື່ນ ທີ່ເປັນການລະເມີດ ຕໍ່ກົດໝາຍວ່າດ້ວຍການຈະລາຈອນທາງບົກ ຕ້ອງປະສານສົມທົບກັບ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ເພື່ອສຶກສາອົບຮົມ, ກ່າວເຕືອນ ແລະ ປະຕິບັດວິໄນ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

**7. ການສະກັດກັ້ນ ແລະ ແກ້ໄຂບັນຫາ ການມົ້ວສຸມ, ໄພສັງຄົມ ແລະ ການພະນັນທຸກປະເພດ**

- ໃຫ້ ຜູ້ບໍລິຫານການສຶກສາ ແລະ ກິລາ ທຸກຂັ້ນ ທັງພາກລັດ ແລະ ພາກເອກະຊົນ ໂຄສະນາ, ເຜີຍແຜ່ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງໃຫ້ ພະນັກງານ-ລັດຖະກອນ, ຄູ-ອາຈານ, ນັກຮຽນ, ນັກສຶກສາ ຫຼື ນັກກິລາ ໃຫ້ນັບຖືຮີດຄອງປະເພນີ ແລະ ເຄົາລົບ ກົດໝາຍ ຮູ້ເຖິງຜົນຮ້າຍຂອງໄພສັງຄົມ ເປັນຕົ້ນ ການພົວພັນສັງຄົມຊູ້ສາວແບບບໍ່ຖືກຕ້ອງ, ການຫຼິ້ນກິນຟຸມເຟືອຍ, ການພະນັນທຸກປະເພດ, ການນຳໃຊ້ສື່ສັງຄົມອອນລາຍທີ່ບໍ່ຖືກຕ້ອງ ແລະ ອື່ນໆ;
- ຖ້າຫາກພົບເຫັນ ພະນັກງານ-ລັດຖະກອນ, ຄູ-ອາຈານ, ນັກຮຽນ, ນັກສຶກສາ ຫຼື ນັກກິລາ ມີພຶດຕິກຳ ທີ່ກ່າວມາຂ້າງເທິງນັ້ນ ໃຫ້ກ່າວເຕືອນ, ສຶກສາອົບຮົມ ແລະ ປະຕິບັດວິໄນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**8. ການສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ ວົງການກິລາ-ກາຍຍະກຳ**

- ໃຫ້ ຜູ້ບໍລິຫານການສຶກສາ ແລະ ກິລາ ທຸກຂັ້ນ ທັງພາກລັດ ແລະ ພາກເອກະຊົນ ໂຄສະນາເຜີຍແຜ່ ບັນດາກົດໝາຍ, ມະຕິ, ຄຳສັ່ງ ແລະ ລະບຽບການ ໃຫ້ແກ່ຄະນະນຳນັກກິລາ, ກຳມະການຕັດສິນ, ຄູຝຶກ ແລະ ນັກກິລາ ໃຫ້ຮັບຮູ້ ແລະ ເຂົ້າໃຈ ຢ່າງເລິກເຊິ່ງ, ທົ່ວເຖິງ ແລະ ເປັນປົກກະຕິຕໍ່ເນື່ອງ;

- ໃຫ້ການຈັດຕັ້ງ ທີ່ຮັບຜິດຊອບວຽກງານ ກິລາ-ກາຍຍະກຳ ສ້າງ ແລະ ປັບປຸງນິຕິກຳ ເພື່ອຄຸ້ມຄອງວຽກງານ ກິລາ-ກາຍຍະກຳ ເຊັ່ນ: ປະກົດການຫຍໍ້ທໍ້ ທີ່ເກີດຂຶ້ນໃນຂົງເຂດ ກິລາ-ກາຍຍະກຳ ເປັນຕົ້ນ ການລິງພະນັນ ດ້ວຍວັດຖຸ, ເງິນຄຳ ແລະ ຊັບສິນ, ການດຳເນີນທຸລະກິດ ກິລາ-ກາຍຍະກຳ ບາງປະເພດກິລາ, ການຄຸ້ມຄອງ ຜູ້ທີ່ເຮັດໜ້າທີ່ ເປັນຜູ້ຄວບຄຸມການແຂ່ງຂັນ, ຄະນະວິຊາການ ທີ່ຮັບຜິດຊອບວຽກງານ ການແຂ່ງຂັນ ແລະ ກຳມະການຕັດສິນ, ການຈັດຕັ້ງປະຕິບັດນະໂຍບາຍ ຕໍ່ຜູ້ບໍລິຫານ, ວິຊາການ, ຄູຝຶກ ແລະ ນັກກິລາ, ຜູ້ທີ່ມີ ຜົນງານຍາດໄດ້ຫຼຽນລາງວັນ ໃນການເຂົ້າຮ່ວມການແຂ່ງຂັນແຕ່ລະຄັ້ງ;
- ໃຫ້ ຜູ້ບໍລິຫານການສຶກສາ ແລະ ກິລາ ທຸກຂັ້ນ ທັງພາກລັດ ແລະ ພາກເອກະຊົນ ເອົາໃຈໃສ່ຕິດຕາມ ນັກ ກິລາ ທີ່ມີພຶດຕິກຳພາໃຫ້ເກີດມີການລົ້ມກິລາ ເຊັ່ນ: ການໃຊ້ສານຕ້ອງຫ້າມ, ພົວພັນສິ່ງເສບຕິດ, ສິ່ງລາມົກ-ອະນາຈານ ໃນເວລາຢູ່ທີ່ພັກເກັບໂຕຝຶກແອບ ຝຶກຊ້ອມ, ການສະແດງ, ການແຂ່ງຂັນ; ມີເຈດຕະນາ ຫຼື ເມີນເສີຍເຮັດໃຫ້ມີການລົ້ມກິລາ ສ້າງຄວາມເສຍຫາຍຕໍ່ສຸຂະພາບ ແລະ ກຽດສັກສີ, ຊີວິດ, ຊັບສິນຂອງຄົນ ອື່ນກໍຄືປະເທດຊາດ ໂດຍເຈດຕະນາ ທີ່ບໍ່ຖືກຕ້ອງ ຕາມກົດໝາຍ, ລະບຽບການ ແລະ ກະຕິກາການ ແຂ່ງຂັນ; ຖືເອົາການແຂ່ງຂັນກິລາ-ກາຍຍະກຳ ເປັນການພະນັນ, ໃຫ້ ແລະ ຮັບສິນບົນ, ສໍ້ໂກງໃນການ ເຄື່ອນໄຫວກິລາ-ກາຍຍະກຳ ເຮັດໃຫ້ເສື່ອມເສຍກຽດສັກສີຂອງນັກກິລາ, ຄອບຄົວ, ປະເທດຊາດ ແລະ ມີ ພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ;
- ການຄັດເລືອກນັກກິລາ, ຄະນະຮັບຜິດຊອບແຕ່ລະຂັ້ນ ຕ້ອງສົມທົບກັບສະຫະພັນກິລາ ແຕ່ລະປະເພດ ໃຫ້ ປະຕິບັດຕາມມາດຕະຖານ ແລະ ເງື່ອນໄຂຢ່າງເຂັ້ມງວດ ເປັນຕົ້ນ ນັກກິລາ ຕ້ອງເປັນຄົນ ຖືສັນຊາດລາວ ຫຼື ສັນຊາດອື່ນ ຕາມການຕົກລົງຂອງລັດຖະບານ ແລະ ປະຕິບັດຕາມກົດໝາຍ;
- ຖ້າພົບເຫັນ ຜູ້ຄວບຄຸມການແຂ່ງຂັນ, ຄະນະວິຊາການ ທີ່ຮັບຜິດຊອບວຽກງານການແຂ່ງຂັນ, ກຳມະການ ຕັດສິນ, ຄູຝຶກ ຫຼື ນັກກິລາ ທີ່ມີພຶດຕິກຳ ກ່າວມາຂ້າງເທິງ ໃຫ້ກ່າວເຕືອນ ແລະ ສຶກສາອົບຮົມ, ກໍລະນີຮ້າຍ ແຮງ ໃຫ້ແຈ້ງເຈົ້າໜ້າທີ່ ແລະ ພາກສ່ວນທີ່ກ່ຽວຂ້ອງ ດຳເນີນການ ຕາມກົດໝາຍ ແລະ ລະບຽບການ ຢ່າງ ເຂັ້ມງວດ.

**໙. ການສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ ການເຂົ້າສະຖານທີ່ຮ້ານບໍລິການເຄື່ອງດື່ມທີ່ມີທາດເຫຼົ້າ, ຮ້ານ ສະນຸກເກີ ແລະ ຮ້ານເກມ**

- ໃຫ້ ຜູ້ບໍລິຫານການສຶກສາ ແລະ ກິລາ ທຸກຂັ້ນ ທັງພາກລັດ ແລະ ພາກເອກະຊົນ, ຄູປະຈຳຫ້ອງ ແລະ ຄູ-ອາຈານ ຕິດຕາມ ການເຄື່ອນໄຫວຂອງນັກຮຽນ, ນັກສຶກສາ ຫຼື ນັກກິລາ ທີ່ຢູ່ໃນຄວາມຮັບຜິດຊອບຂອງ ຕົນ ໃນການເຂົ້າສະຖານທີ່ຮ້ານບໍລິການເຄື່ອງດື່ມທີ່ມີທາດເຫຼົ້າ, ຮ້ານສະນຸກເກີ ແລະ ຮ້ານເກມ;
- ຖ້າຫາກພົບເຫັນ ນັກຮຽນ, ນັກສຶກສາ ຫຼື ນັກກິລາ ເຂົ້າໃຊ້ບໍລິການໃນສະຖານທີ່ຮ້ານບໍລິການເຄື່ອງດື່ມທີ່ມີ ທາດເຫຼົ້າ, ຮ້ານສະນຸກເກີ ແລະ ຮ້ານເກມ ໃນຊົ່ວໂມງຮຽນ ຕ້ອງໄດ້ລາຍງານໃຫ້ການຈັດຕັ້ງທີ່ກ່ຽວຂ້ອງ ເພື່ອສຶກສາອົບຮົມ, ກ່າວເຕືອນ ຫຼື ປະຕິບັດລະບຽບວິໄນ ຕາມລະບຽບຂອງສະຖານການສຶກສາ ແລະ ກິລາ ຖ້າມີກໍລະນີຮ້າຍແຮງ ໃຫ້ລາຍງານຕໍ່ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ເພື່ອດຳເນີນການ ຕາມກົດໝາຍ ແລະ ລະບຽບ ການ ທີ່ກ່ຽວຂ້ອງ.

**໑໐. ການສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ ໃນການປອມແປງ ປະກາສະນີຍະບັດ, ເອກະສານຢັ້ງຢືນການ ສຶກສາ ແລະ ການຂຽນບົດຈົບຊັ້ນ ໃຫ້ນັກຮຽນ, ນັກສຶກສາ ຫຼື ນັກກິລາ**

- ໃຫ້ ຜູ້ບໍລິຫານການສຶກສາ ແລະ ກິລາ ທຸກຂັ້ນ ທັງພາກລັດ ແລະ ເອກະຊົນ ລວມທັງການສຶກສາສົງ ກ່ອນ ຈະຮັບນັກຮຽນ, ນັກສຶກສາ ຫຼື ນັກກິລາ ເຂົ້າຮຽນໃນສະຖານການສຶກສາຂອງຕົນ ຕ້ອງກວດກາປະກາສະນີ ຍະບັດ, ເອກະສານຢັ້ງຢືນການສຶກສາ ແລະ ເອກະສານອື່ນ ທີ່ກ່ຽວຂ້ອງ ໃຫ້ຖືກຕ້ອງ ແລະ ເຂັ້ມງວດ;

- ໃຫ້ ການຈັດຕັ້ງທຸກຂັ້ນ ໃນຂະແໜງການສຶກສາທິການ ແລະ ກິລາ ກ່ອນຈະຮັບລັດຖະກອນໃໝ່ ຕ້ອງກວດກາ ປະກາສະນີຍະບັດ ໂດຍສົມທົບກັບພາກສ່ວນ ທີ່ຄຸ້ມຄອງ ແລະ ອອກປະກາສະນີຍະບັດ ຢ່າງເຂັ້ມງວດ;
- ໃຫ້ ກົມວິຊາການ, ສະຖານການສຶກສາ ທັງພາກລັດ ແລະ ເອກະຊົນ ລວມທັງການສຶກສາສົງ ທີ່ຄຸ້ມຄອງການອອກປະກາສະນີຍະບັດ, ຕ້ອງສ້າງຖານຂໍ້ມູນ, ເວັບໄຊ ເພື່ອເກັບກຳຂໍ້ມູນນັກຮຽນທີ່ເຂົ້າຮຽນ ແລະ ຮຽນຈົບຊັ້ນ ພ້ອມທັງຕ້ອງມີປຶ້ມຕິດຕາມການຮຽນຂອງນັກຮຽນ, ນັກສຶກສາ ຫຼື ນັກກິລາ ຢ່າງຄົບຖ້ວນ;
- ຖ້າພົບເຫັນ ການປອມແປງປະກາສະນີຍະບັດ, ເອກະສານຢັ້ງຢືນການສຶກສາ ແລະ ເອກະສານອື່ນ ທີ່ກ່ຽວຂ້ອງ ຫຼື ຄູອາຈານຂຽນບົດຈົບຊັ້ນໃຫ້ນັກສຶກສາ ໃຫ້ຜູ້ບໍລິຫານການສຶກສາ ແລະ ກິລາ ທຸກຂັ້ນ ທັງພາກລັດ ແລະ ພາກເອກະຊົນ ແຕ່ງຕັ້ງຄະນະກວດກາສະເພາະກິດ ເພື່ອກວດກາ ແລະ ລົງວິໄນ ຕໍ່ ຜູ້ລະເມີດຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

11. **ການຈັດຕັ້ງປະຕິບັດ**

- ມອບໃຫ້ ບັນດາ ຫ້ອງການ, ກົມ, ຫ້ອງການກຳມາທິການສຶກສາສົງສູນກາງ, ອົງການທຽບເທົ່າ, ສະຖາບັນສູນ, ມະຫາວິທະຍາໄລ, ພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ, ຫ້ອງການສຶກສາທິການ ແລະ ກິລາ ເມືອງ, ເທດສະບານ, ນະຄອນ, ສະຖານການສຶກສາ ທັງພາກລັດ ແລະ ເອກະຊົນ ລວມທັງການສຶກສາສົງ ໃນຂອບເຂດທົ່ວປະເທດ ແລະ ພາກສ່ວນທີ່ກ່ຽວຂ້ອງ ນຳໄປຈັດຕັ້ງເຜີຍແຜ່ ຄຳສັ່ງສະບັບນີ້ ໃຫ້ທົ່ວເຖິງ ແລະ ໄດ້ຮັບຜົນດີ ພ້ອມທັງລາຍງານຜົນການຈັດຕັ້ງປະຕິບັດ ແລະ ວິທີແກ້ໄຂບັນຫາທີ່ເກີດຂຶ້ນໃຫ້ກົມກວດກາ ແລະ ຂັ້ນເທິງຖັດຕົນ ຮັບຊາບ ໃນທຸກໆ 03 ເດືອນ ແລະ ປະຈຳປີ ຢ່າງເປັນປົກກະຕິ;
- ມອບໃຫ້ ອົງການຈັດຕັ້ງຊາວໜຸ່ມ, ແມ່ຍິງ, ກຳມະບານ ໃນສະຖານການສຶກສາແຕ່ງຕ່າງໆ ເອົາໃຈໃສ່ຕໍ່ການສຳຫຼວດກວດກາສະມາຊິກຂອງຕົນ ເປັນປົກກະຕິ ແລະ ໃຫ້ຖືເອົາບັນຫາວຽກງານສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ ໃນຂະແໜງການສຶກສາທິການ ແລະ ກິລາ ເປັນເນື້ອໃນສຳຫຼວດກວດກາ;
- ມອບໃຫ້ ກົມກວດກາ ກະຊວງສຶກສາທິການ ແລະ ກິລາ ເປັນເຈົ້າການປະສານສົມທົບ, ຊຸກຍູ້, ຕິດຕາມກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ, ພ້ອມທັງສະຫຼຸບ ລາຍງານ ຜົນການຈັດຕັ້ງປະຕິບັດ ໃຫ້ຂັ້ນເທິງຮັບຊາບ ແລະ ຂໍທິດຊີ້ນຳ ຢ່າງເປັນປົກກະຕິ;

12. ຄຳສັ່ງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ໃຊ້ປ່ຽນແທນ ຄຳສັ່ງວ່າດ້ວຍການສະກັດກັ້ນ ແລະ ແກ້ໄຂສະພາບປະກົດການການຫຍໍ້ທໍ້ໃນຂະແໜງສຶກສາທິການ ແລະ ກິລາ ສະບັບເລກທີ 1790/ສສກ.ກກ, ລົງວັນທີ 25 ທັນວາ 2013.

ລັດຖະມົນຕີ

ກະຊວງສຶກສາທິການ ແລະ ກິລາ
ລັດຖະມົນຕີ

ຮສ.ປອ ພຸດ ສິມມາລາວົງ